ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 238 /ລບ

ນະຄອນຫຼວງວຽງຈັນ, ວັນທີ 18-05-2020

# ດຳລັດ
# ວ່າດ້ວຍ ແນວພັນພືດ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ກະສິກຳ ສະບັບເລກທີ 01/98ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມ ກົດໝາຍວ່າດ້ວຍ ການປ້ອງກັນ ແລະ ກັກກັນພືດ ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0172/ກປ, ລົງວັນທີ 25 ກຸມພາ 2020.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານແນວພັນພືດ ເພື່ອອະນຸລັກແນວພັນພືດພື້ນເມືອງ, ແນວພັນພືດທ້ອງຖິ່ນ, ສົ່ງເສີມການນຳໃຊ້ແນວພັນພືດປັບປຸງ, ແນວພັນພືດໃໝ່ ທີ່ມີຄຸນລັກສະນະພັນດີ ທັງປະລິມານ ແລະ ຄຸນນະພາບ, ໃຫ້ແທດເໝາະກັບແຕ່ລະທ້ອງຖິ່ນ ແນໃສ່ຄຸ້ມຄອງ ແລະ ຍົກລະດັບການຜະລິດພືດ ໃຫ້ມີປະສິດທິຜົນສູງ, ຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ການຜະລິດພືດເປັນສິນຄ້າ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ແນວພັນພືດ**

ແນວພັນພືດ ແມ່ນ ເມັດພັນພືດ ຫຼື ສ່ວນຂະຫຍາຍພັນພືດ ຂອງກຸ່ມພືດ ທີ່ມີກຳມະພັນ, ລັກສະນະທາງພືກສາສາດທີ່ຄືກັນ ຫຼື ຄ້າຍຄືກັນ ແລະ ມີຄຸນລັກສະນະສະເພາະຕົວ, ມີຄວາມສະໝ່ຳສະເໝີ, ມີຄວາມຄົງຕົວທາງດ້ານກາຍະພາບ ແລະ ມີຄວາມແຕກຕ່າງຈາກກຸ່ມອື່ນ ຊຶ່ງປະກອບດ້ວຍ ແນວພັນພືດພື້ນເມືອງ, ແນວພັນພືດທ້ອງຖິ່ນ ແລະ ແນວພັນພືດປັບປຸງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ແນວພັນພືດພື້ນເມືອງ** ໝາຍເຖິງ ແນວພັນພືດ ທີ່ໄດ້ກຳເນີດຢູ່ພາຍໃນປະເທດ ມາແຕ່ດົນນານ ຊຶ່ງມີການນຳໃຊ້ຢ່າງແຜ່ຫຼາຍ;

2. **ແນວພັນພືດທ້ອງຖິ່ນ** ໝາຍເຖິງ ແນວພັນພືດ ທີ່ມີມາຕັ້ງແຕ່ເດີມ ຢູ່ໃນທ້ອງຖິ່ນໃດທ້ອງຖິ່ນໜຶ່ງ ຊຶ່ງສາມາດຮັກສາຄຸນລັກສະນະພິເສດສະເພາະຕົວ ຂອງແນວພັນພືດນັ້ນ;
3. **ແນວພັນພືດປັບປຸງ** ໝາຍເຖິງ ແນວພັນພືດທີ່ໄດ້ຈາກການປະສົມພັນ ຫຼື ຄັດເລືອກພັນ ແຕ່ຍັງຮັກສາລັກສະນະທາງກາຍະພາບຂອງພັນເດີມ;
4. **ເມັດພັນພືດ** ໝາຍເຖິງ ເມັດ ຫຼື ສ່ວນໃດສ່ວນໜຶ່ງຂອງພືດ ທີ່ໃຊ້ປູກ ຫຼື ຂະຫຍາຍພັນ ເປັນຕົ້ນຕໍ, ໜໍ່, ເຫງົ້າ, ງ່າ, ໃບ, ແໜງ, ຕາ, ຮາກ, ຫົວ, ດອກ, ໝາກ ຫຼື ແກ່ນ;
5. **ເຊື້ອພັນພືດ** ໝາຍເຖິງ ຊິ້ນສ່ວນ ຫຼື ທັງໝົດຕົ້ນພືດ ທີ່ມີຂໍ້ມູນພັນທຸກໍາ ທີ່ສາມາດນໍາໃຊ້ເຂົ້າໃນການປະສົມພັນໃຫ້ໄດ້ພັນພືດໃໝ່ ສໍາລັບການປູກຝັງ;
6. **ການອະນຸລັກເຊື້ອພັນພືດ** ໝາຍເຖິງ ການເກັບຮັກສາເຊື້ອພັນພືດ ແຕ່ລະຊະນິດ ໄວ້ໃນທະນາຄານເຊື້ອພັນ ແລະ ໄວ້ໃນທ້ອງຖິ່ນເດີມ;
7. **ເມັດພັນພືດປອມ** ໝາຍເຖິງ ເມັດພັນພືດທີ່ບໍ່ຖືກຕາມຊື່ເມັດພັນພືດ, ເຄື່ອງໝາຍ, ຄຸນນະພາບ, ວັນໝົດອາຍຸ ແລະ ຂໍ້ມູນຕ່າງໆ ທີ່ລະບຸໄວ້ໃນສະຫຼາກ ທີ່ໄດ້ຂຶ້ນທະບຽນແລ້ວ;
8. **ການກວດກາພື້ນທີ່ການຜະລິດເມັດພັນພືດ** ໝາຍເຖິງ ຂະບວນການກວດກາຄຸນນະພາບເມັດພັນພືດ ທີ່ກໍາລັງຈະເລີນເຕີບໂຕໃນພື້ນທີ່ການຜະລິດ ເພື່ອກໍານົດລັກສະນະພັນເດີມ, ອັດຕາຄວາມບໍລິສຸດທາງດ້ານເມັດພັນພືດ ແລະ ລະດັບການເຈືອປົນຂອງເມັດພັນພືດ ຫຼື ເຈືອປົນກັບເມັດພັນພືດອື່ນ;
9. **ການທົດສອບຄຸນນະພາບເມັດພັນພືດ** ໝາຍເຖິງ ຂະບວນການວິໄຈບັນດາອົງປະກອບດ້ານຄຸນນະພາບ ຂອງເມັດພັນພືດ ໃນຫ້ອງວິໄຈ ເຊັ່ນ ຄວາມງອກ, ຄວາມບໍລິສຸດ, ຄວາມຊຸ່ມ ແລະ ການຕິດແປດສັດຕູພືດ.

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບ ວຽກງານແນວພັນພືດ

ລັດ ສົ່ງເສີມ ແລະ ພັດທະນາ ແນວພັນພືດ ໃຫ້ໄປຕາມທິດອຸດສາຫະກໍາທັນສະໄໝ ແລະ ຜະລິດເປັນສິນຄ້າບົນພື້ນຖານຍຸດທະສາດ, ແຜນແມ່ບົດ ກ່ຽວກັບວຽກງານແນວພັນພືດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງເປັນຕົ້ນ ການກໍ່ສ້າງພື້ນຖານໂຄງລ່າງວັດຖຸເຕັກໂນໂລຊີ, ໂຮງງານປຸງແຕ່ງເມັດພັນພືດທັນສະໄໝ, ບໍາລຸງສ້າງບຸກຄະລາກອນ, ອະນຸລັກເຊື້ອພັນພືດ, ຄົ້ນຄວ້າ ແລະ ທົດສອບ, ຂຶ້ນທະບຽນແນວພັນພືດ, ຄວບຄຸມຄຸນນະພາບການຜະລິດເມັດພັນພືດ ແລະ ຖ່າຍທອດເຕັກນິກວິຊາການ.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລົງທຶນໃສ່ ການພັດທະນາແນວພັນພືດ ແລະ ການດໍາເນີນທຸລະກິດເມັດພັນພືດ ບົນພື້ນຖານຫຼັກການວິທະຍາສາດ, ການກໍ່ສ້າງພື້ນຖານໂຄງລ່າງວັດຖຸ ເຕັກໂນໂລຊີ, ໂຮງງານປຸງແຕ່ງເມັດພັນພືດທັນສະໄໝ, ສ້າງຕັ້ງກຸ່ມການຜະລິດເມັດພັນພືດ, ບຸກຄະລາກອນ, ການຄົ້ນຄວ້າ ແລະ ທົດສອບແນວພັນພືດ, ການຜະລິດ, ການນໍາເຂົ້າ ແລະ ການຈໍາໜ່າຍເມັດພັນພືດ ດ້ວຍການສະໜອງ ຂໍ້ມູນຂ່າວສານ, ເຕັກນິກວິຊາການ ແລະ ນະໂຍບາຍທີ່ດິນ, ການປົກປ້ອງກໍາມະສິດ, ແຮງງານ, ພາສີ, ອາກອນ ແລະ ການເຂົ້າເຖິງແຫຼ່ງທຶນ ຕາມລະບຽບກົດໝາຍ.

### ມາດຕາ 5 ຫຼັກການ ກ່ຽວກັບວຽກງານແນວພັນພືດ

ຫຼັກການ ກ່ຽວກັບວຽກງານແນວພັນພືດ ມີ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ນໍາໃຊ້ແນວພັນພືດ ຢ່າງມີປະສິດທິຜົນ ແລະ ຮັບປະກັນການປົກປັກຮັກສາເຊື້ອພັນພືດທີ່ດີບໍ່ໃຫ້ສູນພັນ;

4. ຮັບປະກັນການສະໜອງເມັດພັນພືດ ທີ່ມີຄຸນນະພາບດີ ໃຫ້ພຽງພໍກັບຄວາມຕ້ອງການໃນການຜະລິດໄປພ້ອມໆກັບການຮັກສາສຸຂະພາບຂອງຄົນ, ສັດ ແລະ ການປົກປັກຮັກສາສິ່ງແວດລ້ອມ ແລະ ລະບົບນິເວດວິທະຍາ;
5. ຮັບປະກັນຜົນປະໂຫຍດຂອງລັດ, ລວມໝູ່, ຄອບຄົວ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ;
6. ຮັບປະກັນ ຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 6 ຂອບເຂດການນຳໃຊ້**

ກົດໝາຍສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ກ່ຽວກັບວຽກງານແນວພັນພືດ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືກັບສາກົນ**

ລັດ ສົ່ງເສີມ ການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແນວພັນພືດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ.

## ໝວດທີ 2
## ປະເພດ ແລະ ບັນຊີ ແນວພັນພືດ

**ມາດຕາ 8 ປະເພດແນວພັນພືດ**

ແນວພັນພືດ ປະກອບມີ ສາມ ປະເພດ ດັ່ງນີ້:
1. ແນວພັນພືດທົ່ວໄປ;
2. ແນວພັນພືດໃໝ່;
3. ແນວພັນພືດສົ່ງເສີມ.

**ມາດຕາ 9 ແນວພັນພືດທົ່ວໄປ**

ແນວພັນພືດທົ່ວໄປ ແມ່ນ ແນວພັນພືດ ທີ່ຊາວກະສິກອນເຮັດການຜະລິດທົ່ວໄປ ອາດຈະເປັນແນວພັນພືດພື້ນເມືອງ, ແນວພັນພືດທ້ອງຖິ່ນ, ແນວພັນພືດປັບປຸງ ຫຼື ແນວພັນພືດໃໝ່ ແຕ່ບໍ່ທັນໄດ້ຮັບການຂຶ້ນທະບຽນເປັນແນວພັນພືດສົ່ງເສີມຈາກ ກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 10 ແນວພັນພືດໃໝ່**

ແນວພັນພືດໃໝ່ ແມ່ນ ແນວພັນທີ່ສ້າງຂຶ້ນມາໃໝ່ດ້ວຍການປະສົມພັນ ແລະ ການຄັດເລືອກ ຊຶ່ງມີລັກສະນະແຕກຕ່າງ, ສະໝ່ຳສະເໝີ ແລະ ຄວາມຄົງຕົວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 11 ແນວພັນພືດສົ່ງເສີມ**

ແນວພັນພືດສົ່ງເສີມ ແມ່ນ ແນວພັນທີ່ມີຄຸນລັກສະນະດີເດັ່ນ ທາງດ້ານການປູກຝັງ, ມີຄວາມຄົງຕົວ, ສະໝ່ຳສະເໝີ, ມີສະມັດຕະພາບສູງ, ທົນທານຕໍ່ສັດຕູພືດ ແລະ ເປັນທີ່ນິຍົມຂອງຜູ້ບໍລິໂພກ ຊຶ່ງໄດ້ຮັບການຂຶ້ນທະບຽນ ເປັນແນວພັນພືດສົ່ງເສີມສຳລັບການປູກຝັງຈາກ ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງປະກອບດ້ວຍ ແນວພັນພືດປັບປຸງ, ແນວພັນພືດພື້ນເມືອງ ແລະ ແນວພັນພືດທ້ອງຖິ່ນ.

### ມາດຕາ 12 ບັນຊີແນວພັນພືດ

ບັນຊີແນວພັນພືດ ແມ່ນ ລາຍການແນວພັນພືດ ທີ່ສາມາດນຳມາຂຶ້ນທະບຽນ ເພື່ອອະນຸຍາດໃຫ້ ຜະລິດ, ນຳເຂົ້າ, ສົ່ງອອກ, ສົ່ງອອກຕໍ່, ສົ່ງຜ່ານ, ຈຳໜ່າຍ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ ແລະ ທົບທວນ ແນວພັນພືດ ໃນແຕ່ລະໄລຍະ.

## ໝວດທີ 3
## ການອະນຸລັກ ເຊື້ອພັນພືດ

### ມາດຕາ 13 ການອະນຸລັກເຊື້ອພັນພືດ

ການອະນຸລັກເຊື້ອພັນພືດ ແມ່ນ ການເກັບຮັກສາເຊື້ອພັນພືດ ແຕ່ລະຊະນິດ ໄວ້ໃນທະນາຄານເຊື້ອພັນພືດ ແລະ ໄວ້ໃນທ້ອງຖິ່ນເດີມ.

ກິດຈະກຳອະນຸລັກເຊື້ອພັນພືດ ປະກອບດ້ວຍ:

1. ການສຳຫຼວດ ແລະ ເຕົ້າໂຮມ ເຊື້ອພັນພືດ;
2. ການແລກປ່ຽນ ເຊື້ອພັນພືດ;
3. ການປະເມີນ ເຊື້ອພັນພືດ;
4. ຖານຂໍ້ມູນ ເຊື້ອພັນພືດ.

### ມາດຕາ 14 ການສຳຫຼວດ ແລະ ເຕົ້າໂຮມ ເຊື້ອພັນພືດ

ການສຳຫຼວດ ແລະ ເຕົ້າໂຮມ ເຊື້ອພັນພືດ ແມ່ນ ການເກັບຕົວຢ່າງແນວພັນພືດ ແລະ ຂໍ້ມູນ ກ່ຽວກັບລັກສະນະກຳມະພັນ, ປະເພດ, ຊະນິດ ແລະ ແຫຼ່ງເຊື້ອພັນພືດ ໃນແຕ່ລະໄລຍະ ພ້ອມທັງເກັບຮັກສາ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ເຊື້ອພັນພືດໃຫ້ເກີດຜົນປະໂຫຍດສູງສຸດ ແລະ ຍືນຍົງ.

ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສຳຫຼວດ ແລະ ເຕົ້າໂຮມເຊື້ອພັນພືດ ທີ່ມີຄວາມສ່ຽງໃນການສູນພັນ ແລະ ຈຳເປັນຕ້ອງອະນຸລັກ ເພື່ອສ້າງເປັນບັນຊີເຊື້ອພັນພືດຕ້ອງຫ້າມ.

### ມາດຕາ 15 ການແລກປ່ຽນ ເຊື້ອພັນພືດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງແລກປ່ຽນເຊື້ອພັນພືດ ເພື່ອການຄົ້ນຄວ້າ, ຄັດເລືອກ ແລະ ປັບປຸງພັນພືດໃໝ່ ຕ້ອງໄດ້ຮັບອະນຸຍາດຈາກ ກະຊວງກະສິກຳ ແລະ ປ່າໄມ້. ສຳລັບການແລກປ່ຽນ ເຊື້ອພັນພືດກັບສາກົນ ຕ້ອງໄດ້ຮັບການຢັ້ງຢືນສຸຂານາໄມພືດຈາກປະເທດຕົ້ນທາງ ແລະ ການຢັ້ງຢືນ ກ່ຽວກັບມາດຕະຖານການເຄື່ອນຍ້າຍແນວພັນພືດ ຂອງສົນທິສັນຍາ ກ່ຽວກັບ ແຫຼ່ງເຊື້ອພັນພືດ ເພື່ອອາຫານ ແລະ ການກະເສດ ແລະ ມາດຕະຖານອື່ນທີ່ຮັບຮູ້ໂດຍ ກະຊວງກະສິກຳ ແລະ ປ່າໄມ້.

### ມາດຕາ 16 ການປະເມີນ ເຊື້ອພັນພືດ

ການປະເມີນ ເຊື້ອພັນພືດ ແມ່ນ ການຕີລາຄາ ເຊື້ອພັນພືດ ທີ່ໄດ້ສຳຫຼວດ ແລະ ເຕົ້າໂຮມ ເພື່ອຈຳແນກຄຸນລັກສະນະປະຈຳພັນພືດຂອງແຕ່ລະສາຍພັນ ແລະ ບັນທຶກເຂົ້າໃນຖານຂໍ້ມູນຂອງ ກະຊວງກະສິກຳ ແລະ ປ່າໄມ້.

### ມາດຕາ 17 ຖານຂໍ້ມູນ ເຊື້ອພັນພືດ

ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເກັບກຳ ແລະ ພັດທະນາຂໍ້ມູນ ເຊື້ອພັນພືດ ໂດຍສະເພາະ ເຊື້ອພັນພືດທີ່ມີຄວາມສ່ຽງໃນການສູນພັນ ແລະ ຈຳເປັນຕ້ອງອະນຸລັກ ບັນຈຸເຂົ້າໃນຖານຂໍ້ມູນ

ເພື່ອຄຸ້ມຄອງ, ຕິດຕາມ, ກວດກາ ແລະ ນຳໃຊ້ເຂົ້າໃນການປັບປຸງ ແລະ ພັດທະນາ ແນວພັນພືດໃໝ່ ພາຍໃນປະເທດ, ຮັບປະກັນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

## ໝວດທີ 4
## ການຄົ້ນຄວ້າ ແລະ ການທົດສອບ ແນວພັນພືດ

### ມາດຕາ 18 ການຄົ້ນຄວ້າແນວພັນພືດ

ການຄົ້ນຄວ້າແນວພັນພືດ ແມ່ນ ຂະບວນການພັດທະນາແນວພັນພືດ ເລີ່ມຈາກການສ້າງແນວພັນພືດ ຫຼື ການຄັດເລືອກແນວພັນພືດພື້ນເມືອງທີ່ມີຢູ່ແລ້ວ ໃຫ້ເປັນແນວພັນພືດປັບປຸງ ແລະ ແນວພັນພືດໃໝ່ ອອກມານຳໃຊ້ ເພື່ອຜະລິດເປັນສະບຽງອາຫານ ແລະ ສິນຄ້າ.

ກະຊວງກະສິກຳ ແລະ ປ່າໄມ້ ກຳນົດລະບຽບ ກ່ຽວກັບ ການ ຄົ້ນຄວ້າ, ຄັດເລືອກ, ປັບປຸງພັນພືດໃໝ່ ທີ່ຕ້ານທານຕໍ່ສັດຕູພືດ ແລະ ແທດເໝາະກັບເງື່ອນໄຂສະພາບແວດລ້ອມຂອງແຕ່ລະທ້ອງຖິ່ນ ເພື່ອເພີ່ມສະມັດຕະພາບ ແລະ ຄຸນນະພາບ.

### ມາດຕາ 19 ການທົດສອບແນວພັນພືດ

ການທົດສອບແນວພັນພືດ ແມ່ນ ຂະບວນການຕິດຕາມ ແລະ ປະເມີນຄວາມແຕກຕ່າງ, ຄວາມສະໝໍ່າສະເໝີ, ຄວາມຄົງຕົວ, ສະມັດຕະພາບ ແລະ ຄວາມຕ້ານທານຕໍ່ສັດຕູພືດ ຂອງແນວພັນພືດໃໝ່ ຊຶ່ງດຳເນີນ ໂດຍໜ່ວຍງານທົດສອບແນວພັນພືດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ຈາກກະຊວງກະສິກຳ ແລະ ປ່າໄມ້. ສິດ, ໜ້າທີ່ ແລະ ໂຄງປະກອບການຈັດຕັ້ງຂອງໜ່ວຍງານດັ່ງກ່າວ ມີລະບຽບການຕ່າງຫາກ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ທົດສອບແນວພັນພືດຂອງຕົນ ຕ້ອງສະເໜີຕໍ່ໜ່ວຍງານທົດສອບແນວພັນພືດ ເພື່ອດຳເນີນການທົດສອບ. ໃນກໍລະນີ ນັກປັບປຸງພັນພືດ ດຳເນີນການທົດສອບເອງ ຕ້ອງປະຕິບັດຕາມຂັ້ນຕອນການທົດສອບ ທີ່ ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

ແນວພັນພືດສຳລັບການປູກຝັງ ທີ່ຈະຈົດທະບຽນພັນພືດໃໝ່ ຕ້ອງໄດ້ຜ່ານການທົດສອບຄວາມແຕກຕ່າງ, ຄວາມສະໝໍ່າສະເໝີ ແລະ ຄວາມຄົງຕົວ ເພື່ອປົກປ້ອງສິດຂອງນັກປັບປຸງພັນພືດ.

ແນວພັນພືດສຳລັບການປູກຝັງ ທີ່ຈະຂຶ້ນທະບຽນເປັນແນວພັນພືດສົ່ງເສີມ ຕ້ອງໄດ້ຜ່ານການທົດສອບຄຸນຄ່າທາງການຜະລິດ ແລະ ການນຳໃຊ້ ເພື່ອປົກປ້ອງສິດຜົນປະໂຫຍດຂອງຜູ້ຊົມໃຊ້.

## ໝວດທີ 5
## ການຂຶ້ນທະບຽນແນວພັນພືດສົ່ງເສີມ

### ມາດຕາ 20 ການຂຶ້ນທະບຽນແນວພັນພືດສົ່ງເສີມ

ການຂຶ້ນທະບຽນແນວພັນພືດສົ່ງເສີມ ແມ່ນ ຂະບວນການຢັ້ງຢືນ ແລະ ຮັບຮອງ ແນວພັນພືດສົ່ງເສີມ ເພື່ອປົກປ້ອງສິດຜົນປະໂຫຍດຂອງຜູ້ຊົມໃຊ້.

ແນວພັນພືດ ທີ່ໄດ້ຈາກການ ຄົ້ນຄວ້າ, ຜະລິດ ແລະ ນຳເຂົ້າ ເພື່ອຈຳໜ່າຍ ແລະ ນຳໃຊ້ເຂົ້າໃນການປູກຝັງ ຕ້ອງໄດ້ຜ່ານການຂຶ້ນທະບຽນເປັນແນວພັນພືດສົ່ງເສີມ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂຶ້ນທະບຽນແນວພັນພືດສົ່ງເສີມ ຕ້ອງສະເໜີຕໍ່ກົມປູກຝັງ ຕາມຂັ້ນຕອນ ແລະ ວິທີການ ທີ່ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 21 ແນວພັນພືດທີ່ຍົກເວັ້ນການຂຶ້ນທະບຽນ**

ແນວພັນພືດ ທີ່ຍົກເວັ້ນການຂຶ້ນທະບຽນ ມີ ດັ່ງນີ້:

1. ແນວພັນພືດ ທີ່ສົ່ງອອກຕໍ່, ສົ່ງຜ່ານ ຫຼື ນໍາເຂົ້າເພື່ອຜະລິດແລ້ວສົ່ງອອກຕາມສັນຍາລົງທຶນ ລະຫວ່າງຜູ້ລົງທຶນພາຍໃນກັບຕ່າງປະເທດ;
2. ແນວພັນພືດທີ່ນໍາເຂົ້າ ເພື່ອການ ຄົ້ນຄວ້າ, ທົດລອງ, ສາທິດ, ທົດສອບ, ວາງສະແດງ, ຊ່ວຍເຫຼືອ, ເປັນຂອງຂວັນ, ແລກປ່ຽນ ແລະ ເພື່ອກິດຈະການຂອງລັດ.

ແນວພັນພືດທີ່ຍົກເວັ້ນການຂຶ້ນທະບຽນ, ກ່ອນຈະນໍາເຂົ້າ ຕ້ອງຂໍອະນຸຍາດຈາກ ກະຊວງກະສິກໍາ ແລະ ປ່າໄມ້.

**ມາດຕາ 22 ເງື່ອນໄຂການຂຶ້ນທະບຽນແນວພັນພືດສົ່ງເສີມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂຶ້ນທະບຽນແນວພັນພືດສົ່ງເສີມ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ໄດ້ຜ່ານການທົດສອບຄຸນນະພາບ ແລະ ຄຸນລັກສະນະປະຈໍາແນວພັນພືດ ຈາກໜ່ວຍງານທົດສອບແນວພັນພືດ;
2. ມີຜົນການທົດສອບການຜະລິດໃນພື້ນທີ່ບໍລິເວນກວ້າງ ແລະ ໄດ້ຮັບການຢັ້ງຢືນຜົນການທົດສອບ ຈາກອົງການຄຸ້ມຄອງແນວພັນພືດ ຂັ້ນແຂວງ;
3. ມີລັກສະນະດີເດັ່ນ ທາງດ້ານການປູກຝັງ, ມີຄວາມຄົງຕົວສະໝໍ່າສະເໝີ, ໃຫ້ຜົນຜະລິດສູງ, ທົນທານຕໍ່ສັດຕູພືດ, ມີຄຸນນະພາບດີ ເປັນທີ່ນິຍົມທົ່ວໄປ;
4. ແນວພັນພືດທີ່ນໍາເຂົ້າ ຕ້ອງໄດ້ຂຶ້ນທະບຽນຈາກປະເທດສົ່ງອອກ;
5. ສໍາລັບຜູ້ດໍາເນີນທຸລະກິດ ກ່ຽວກັບການຜະລິດ ຫຼື ການນໍາເຂົ້າເມັດພັນພືດ ຕ້ອງມີໃບອະນຸຍາດດໍາເນີນທຸລະກິດເມັດພັນພືດ.

**ມາດຕາ 23 ເອກະສານ ປະກອບການຂຶ້ນທະບຽນ**

ເອກະສານ ປະກອບການຂຶ້ນທະບຽນແນວພັນພືດສົ່ງເສີມ ມີດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມ ທີ່ອົງການຄຸ້ມຄອງວຽກງານແນວພັນພືດ ກໍານົດ;
2. ຂໍ້ມູນ ກ່ຽວກັບ ແຫຼ່ງທີ່ມາ ແລະ ລັກສະນະປະຈໍາແນວພັນພືດ;
3. ຕົວຢ່າງ ສະຫຼາກ ແລະ ເມັດພັນພືດ;
4. ໃບມອບສິດ ແລະ ບັດປະຈໍາຕົວຂອງຜູ້ຍື່ນເອກະສານ ໃນກໍລະນີໃຫ້ຜູ້ອື່ນມາຂໍຂຶ້ນທະບຽນແທນ;
5. ສໍາເນົາ ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດໍາເນີນທຸລະກິດເມັດພັນພືດ ສໍາລັບຜູ້ດໍາເນີນທຸລະກິດກ່ຽວກັບເມັດພັນພືດ;
6. ເປົ້າໝາຍພື້ນທີ່ ທົດສອບ, ສາທິດ ຫຼື ຈໍາໜ່າຍ;
7. ບົດລາຍງານຜົນການທົດສອບແນວພັນພືດພາກສະໜາມ;
8. ເອກະສານອື່ນ ທີ່ເຫັນວ່າມີຄວາມຈໍາເປັນ ຕາມການຮຽກຮ້ອງຂອງກົມປູກຝັງ.

ນອກຈາກເອກະສານ ທີ່ປະກອບມາຂ້າງເທິງນັ້ນແລ້ວ ແນວພັນພືດທີ່ນໍາເຂົ້າຈາກຕ່າງປະເທດ ຕ້ອງປະກອບເອກະສານເພີ່ມຕື່ມ ດັ່ງນີ້:

1. ສໍາເນົາ ໃບທະບຽນ ຫຼື ໃບຮັບຮອງແນວພັນພືດ ຈາກປະເທດຕົ້ນກໍາເນີດ;
2. ສະຫຼາກ ແລະ ໃບຢັ້ງຢືນຜົນການວິໄຈ ເມັດພັນພືດ ຈາກປະເທດຕົ້ນກໍາເນີດ;
3. ໃບມອບສິດຈາກຜູ້ຜະລິດແນວພັນພືດ ຂອງປະເທດສົ່ງອອກ.

**ມາດຕາ 24 ການພິຈາລະນາຂຶ້ນທະບຽນແນວພັນພືດສິ່ງເສີມ**

ພາຍຫຼັງໄດ້ຮັບສຳນວນເອກະສານປະກອບຂໍຂຶ້ນທະບຽນແນວພັນພືດສິ່ງເສີມແລ້ວ ກົມປູກຝັງ ຕ້ອງຄົ້ນຄວ້າ ພິຈາລະນາ ອອກໃບທະບຽນແນວພັນພືດຊົ່ວຄາວ ພາຍໃນ ສິບຫ້າວັນ ນັບແຕ່ວັນໄດ້ຮັບເອກະສານຂໍຂຶ້ນ ທະບຽນ ເປັນຕົ້ນໄປ. ໃນກໍລະນີບໍ່ສາມາດອອກທະບຽນແນວພັນພືດຊົ່ວຄາວ ກົມປູກຝັງ ຕ້ອງແຈ້ງເຫດຜົນໃຫ້ຜູ້ຮ້ອງຂໍ ເປັນລາຍລັກອັກສອນ.

ໃບທະບຽນແນວພັນພືດຊົ່ວຄາວ ມີອາຍຸການນຳໃຊ້ ໜຶ່ງປີ ແລະ ສາມາດຕໍ່ໄດ້. ສຳລັບເນື້ອໃນຂອງໃບທະບຽນແນວພັນພືດຊົ່ວຄາວ ຕ້ອງກຳນົດຂອບເຂດ ການນຳໃຊ້ໃບທະບຽນ.

**ມາດຕາ 25 ການອອກໃບທະບຽນແນວພັນພືດສິ່ງເສີມຖາວອນ**

ພາຍຫຼັງໄດ້ຮັບການຂຶ້ນທະບຽນຊົ່ວຄາວແລ້ວ ຜູ້ສະເໜີຕ້ອງຮີບຮ້ອນ ສົມທົບກັບໜ່ວຍງານທົດສອບ ແນວພັນພືດ ເພື່ອດຳເນີນການທົດສອບການຜະລິດໃນພື້ນທີ່ບໍລິເວນກວ້າງ ແລະ ປະຕິບັດຕາມເງື່ອນໄຂທີ່ກຳນົດໄວ້ໃນ ຂໍ້ 2, ແລະ ຂໍ້ 3 ມາດຕາ 22 ຂອງດຳລັດສະບັບນີ້. ເມື່ອສຳເລັດແລ້ວ ຕ້ອງລາຍງານຜົນການທົດສອບໃຫ້ກົມປູກຝັງ ເພື່ອພິຈາລະນາອອກໃບທະບຽນແນວພັນພືດຖາວອນ. ໃບທະບຽນແນວພັນພືດຖາວອນ ມີອາຍຸການນຳໃຊ້ ສາມປີ ແລະ ສາມາດຕໍ່ໄດ້.

ແນວພັນພືດ ທີ່ໄດ້ຂຶ້ນທະບຽນຖາວອນ ຈະໄດ້ບັນທຶກເຂົ້າໃນບັນຊີລາຍຊື່ແນວພັນພືດສິ່ງເສີມ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ເຜີຍແຜ່ໃຫ້ສັງຄົມຊາບ.

**ມາດຕາ 26 ການຖອນໃບທະບຽນແນວພັນພືດສິ່ງເສີມ**

ກົມປູກຝັງ ສາມາດຖອນໃບທະບຽນແນວພັນພືດສິ່ງເສີມ ໃນກໍລະນີ ດັ່ງນີ້:

1. ແນວພັນພືດທີ່ໄດ້ຂຶ້ນທະບຽນເປັນແນວພັນພືດສິ່ງເສີມນັ້ນ ມີລັກສະນະບໍ່ຖືກຕ້ອງ ກັບຂໍ້ມູນທີ່ນຳມາສະເໜີໃນເບື້ອງຕົ້ນ;
2. ແນວພັນພືດທີ່ໄດ້ຂຶ້ນທະບຽນ ນຳໄປເຮັດການຜະລິດພາຍໃນສອງປີ ແຕ່ບໍ່ມີຜົນດີຕໍ່ຊາວກະສິກອນ ເປັນຕົ້ນ ສະມັດຕະພາບຕໍ່າ, ມີທ່າອຽງໃນການລະບາດຂອງສັດຕູພືດສູງຂຶ້ນ ແລະ ຊາວກະສິກອນບໍ່ນິຍົມໃຊ້.

ຜູ້ຖືກຖອນໃບທະບຽນແນວພັນພືດສິ່ງເສີມ ສາມາດສະເໜີ ຫຼື ອຸທອນ ຢ່າງເປັນລາຍລັກອັກສອນ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ພາຍໃນກຳນົດເວລາ ສາມສິບ ວັນ ນັບແຕ່ວັນຖືກຖອນເປັນຕົ້ນໄປ ເພື່ອພິຈາລະນາ ລຶບລ້າງ ຖ້າຫາກສາມາດພິສູດໃຫ້ເຫັນວ່າ ຕົນໄດ້ປະຕິບັດຕາມເງື່ອນໄຂ ຫຼື ລະບຽບການຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ.

## ໝວດທີ 6
## ການຄວບຄຸມຄຸນນະພາບເມັດພັນພືດ

**ມາດຕາ 27 ການຄວບຄຸມຄຸນນະພາບເມັດພັນພືດ**

ການຄວບຄຸມຄຸນນະພາບເມັດພັນພືດ ແມ່ນ ມາດຕະການທີ່ນຳໃຊ້ ເພື່ອຢັ້ງຢືນຄຸນນະພາບເມັດພັນພືດ ໃຫ້ມີຄຸນລັກສະນະພັນດີ ທັງປະລິມານ ແລະ ຄຸນນະພາບ ຊຶ່ງປະກອບດ້ວຍ:

1. ມາດຕະຖານຄຸນນະພາບເມັດພັນພືດ;
2. ການຢັ້ງຢືນຄຸນນະພາບເມັດພັນພືດ;
3. ການກວດກາພື້ນທີ່ການຜະລິດເມັດພັນພືດ;
4. ການທົດສອບຄຸນນະພາບເມັດພັນພືດຢູ່ຫ້ອງວິໄຈ;
5. ການອອກໃບຢັ້ງຢືນຄຸນນະພາບເມັດພັນພືດ;
6. ສະຫຼາກ ແລະ ການຕິດສະຫຼາກ;

7. ການເກັບຮັກສາ ແລະ ຂົນສົ່ງ;
8. ການໂຄສະນາ;
9. ການນຳເຂົ້າເມັດພັນພືດ;
10. ການສົ່ງອອກ ແລະ ການສົ່ງອອກຕໍ່ ເມັດພັນພືດ;
11. ການສົ່ງຜ່ານເມັດພັນພືດ;
12. ການຈຳໜ່າຍ.

**ມາດຕາ 28 ມາດຕະຖານຄຸນນະພາບເມັດພັນພືດ**

ມາດຕະຖານຄຸນນະພາບເມັດພັນພືດ ແມ່ນ ການກຳນົດລະດັບ ຄວາມບໍລິສຸດ, ຄວາມຊຸ່ມ, ຄວາມງອກ ແລະ ການຕິດແປດຂອງສັດຕູພືດ ຕາມລະບົບມາດຕະຖານຄຸນນະພາບເມັດພັນພືດທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ ແລະ ປະກາດໃຊ້ ບົນພື້ນຖານຄວາມສອດຄ່ອງກັບມາດຕະຖານຂອງ ພາກພື້ນ ແລະ ສາກົນ.

**ມາດຕາ 29 ການຢັ້ງຢືນຄຸນນະພາບເມັດພັນພືດ**

ການຢັ້ງຢືນຄຸນນະພາບເມັດພັນພືດ ແມ່ນ ຂະບວນການກວດກາພື້ນທີ່ການຜະລິດ ແລະ ການທົດສອບ ຄຸນນະພາບ ເມັດພັນພືດ ຢູ່ຫ້ອງທົດລອງ ຕາມມາດຕະຖານຄຸນນະພາບທີ່ໄດ້ກຳນົດໄວ້ ໃນດຳລັດສະບັບນີ້ ເພື່ອອອກໃບຢັ້ງຢືນຄຸນນະພາບເມັດພັນພືດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຢັ້ງຢືນຄຸນນະພາບເມັດພັນພືດຂອງຕົນ ຕ້ອງສະເໜີ ຕໍ່ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕາມຂັ້ນຕອນ ແລະ ວິທີການ ທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 30 ການກວດກາພື້ນທີ່ການຜະລິດເມັດພັນພືດ**

ພາຍຫຼັງໄດ້ຮັບໃບສະເໜີຂໍຢັ້ງຢືນຄຸນນະພາບເມັດພັນພືດ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕ້ອງດຳເນີນການກວດກາພື້ນທີ່ການຜະລິດ ເພື່ອປະເມີນການຈະເລີນເຕີບໂຕຂອງແນວພັນພືດ, ການລະບາດຂອງສັດຕູພືດ ແລະ ລະດັບການເຈືອປົນກັບພືດອື່ນ.

ການກວດກາພື້ນທີ່ການຜະລິດເມັດພັນພືດ ຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ການກວດກາພື້ນທີ່ການຜະລິດເມັດພັນພືດເບື້ອງຕົ້ນ ເປັນການປະເມີນ ແລະ ໃຫ້ຄຳແນະນຳ ຜູ້ຜະລິດ ເພື່ອຮັກສາຄວາມບໍລິສຸດຂອງແນວພັນເດີມ;
2. ການຢັ້ງຢືນພື້ນທີ່ການຜະລິດເມັດພັນພືດ ເປັນການກວດກາ ແລະ ປະເມີນພື້ນທີ່ຜະລິດເມັດພັນພືດ ເພື່ອຢັ້ງຢືນຄວາມຖືກຕ້ອງຕາມວິທີການ ແລະ ມາດຕະຖານຄຸນນະພາບເມັດພັນພືດທີ່ກຳນົດໄວ້ ໃນດຳລັດສະບັບນີ້.

**ມາດຕາ 31 ການທົດສອບຄຸນນະພາບເມັດພັນພືດຢູ່ຫ້ອງວິໄຈ**

ພາຍຫຼັງທີ່ໄດ້ຮັບການຢັ້ງຢືນ ມາດຕະຖານພື້ນທີ່ການຜະລິດເມັດພັນພືດ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕ້ອງດຳເນີນການສຸ່ມຕົວຢ່າງ ແລະ ທົດສອບຄຸນນະພາບເມັດພັນ ຢູ່ຫ້ອງວິໄຈ ເພື່ອຊອກຫາລະດັບ ຄວາມຊຸ່ມ, ຄວາມງອກ, ຄວາມບໍລິສຸດ, ສິ່ງເຈືອປົນ ແລະ ການຕິດແປດສັດຕູພືດ ຕາມມາດຕະຖານຄຸນນະພາບເມັດພັນພືດທີ່ກຳນົດໄວ້ ໃນດຳລັດສະບັບນີ້.

ສຳລັບມາດຕະຖານຫ້ອງວິໄຈ, ຂັ້ນຕອນ ແລະ ວິທີການທົດສອບຄຸນນະພາບເມັດພັນພືດ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ.

**ມາດຕາ 32 ການອອກໃບຢັ້ງຢືນຄຸນນະພາບເມັດພັນພືດ**

ພາຍຫຼັງສຳເລັດການທົດສອບຢູ່ຫ້ອງວິໄຈຄຸນນະພາບເມັດພັນພືດແລ້ວ ກົມປູກຝັງ ຫຼື ພະແນກກະສິກຳແລະປ່າໄມ້ ຂັ້ນແຂວງ ຕ້ອງອອກໃບຢັ້ງຢືນຄຸນນະພາບເມັດພັນພືດ ພາຍໃນ ສາມວັນ ລັດຖະການ ນັບແຕ່ວັນໄດ້ຮັບຜົນການທົດສອບຢ່າງເປັນທາງການຈາກຫ້ອງວິໄຈ. ໃນກໍລະນີ ປະຕິເສດການອອກໃບຢັ້ງຢືນຄຸນນະພາບເມັດພັນພືດ ຕ້ອງແຈ້ງໃຫ້ຜູ້ສະເໜີ ເປັນລາຍລັກອັກສອນ.

ໃບຢັ້ງຢືນຄຸນນະພາບເມັດພັນພືດ ມີອາຍຸການນຳໃຊ້ຕາມແຕ່ລະຊະນິດເມັດພັນພືດ ທີ່ກົມປູກຝັງກຳນົດ.

**ມາດຕາ 33 ສະຫຼາກ ແລະ ການຕິດສະຫຼາກ**

ເມັດພັນພືດທຸກຊະນິດ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ, ສົ່ງອອກຕໍ່ ແລະ ຈຳໜ່າຍ ໃນ ສປປ ລາວ ຕ້ອງມີສະຫຼາກເປັນຮູບພາບ, ຂໍ້ຄວາມ ຫຼື ເປັນຕົວອັກສອນ ພາສາລາວ ແລະ ພາສາຕ່າງປະເທດ ເພື່ອສະແດງ, ຊື່ບອກຊະນິດ ແລະ ຊື່ແນວພັນພືດ, ຄວາມງອກ, ຄວາມຊຸ່ມ, ຄວາມບໍລິສຸດ, ນ້ຳໜັກ, ອາຍຸການນຳໃຊ້ ລວມທັງຄຳແນະນຳໃນການປູກ.

ການຕິດສະຫຼາກ ຕ້ອງຕິດແນບ, ຫ້ອຍ ຫຼື ພິມໃສ່ກັບພາຊະນະບັນຈຸເມັດພັນພືດ ໂດຍກົງ ແລະ ຕ້ອງຕິດໃຫ້ມີຄວາມແໜ້ນໜາ, ທົນທານ ແລະ ໝັ້ນໜຽວ, ລາຍລະອຽດ ຈະໄດ້ກຳນົດໄວ້ ໃນລະບຽບການສະເພາະ.

**ມາດຕາ 34** ການເກັບຮັກສາ ແລະ ຂົນສົ່ງ

ການເກັບຮັກສາ ແລະ ຂົນສົ່ງເມັດພັນພືດ ຕ້ອງປະຕິບັດ ດັ່ງນີ້:

1. ເກັບຮັກສາໄວ້ໃນສະຖານທີ່ ສະອາດ, ເໝາະສົມ ແລະ ປອດໄພ;
2. ການເກັບຮັກສາ ແລະ ການຂົນສົ່ງເມັດພັນພືດຕ້ອງໃຫ້ແຍກກັນຕ່າງຫາກ ແລະ ບໍ່ໃຫ້ເກັບ ຫຼື ຂົນສົ່ງປົນ ກັບຈຳພວກ ຝຸ່ນ, ຢາປາບສັດຕູພືດ ແລະ ສານເຄມີ.

**ມາດຕາ 35 ການໂຄສະນາ**

ການໂຄສະນາແນວພັນພືດ ຕ້ອງໃຫ້ຖືກຕ້ອງກັບ ເນື້ອໃນ, ຮູບການ ແລະ ສະຖານທີ່ ທີ່ໄດ້ຮັບອະນຸຍາດ. ສຳລັບເນື້ອໃນການໂຄສະນາ ຕ້ອງຊັດເຈນ, ຖືກຕ້ອງຕາມຄວາມເປັນຈິງຂອງ ຊະນິດແນວພັນພືດ, ເຄື່ອງໝາຍ ການຄ້າຂອງແນວພັນພືດ, ຄຸນລັກສະນະແນວພັນພືດ ແລະ ຄຸນນະພາບຂອງເມັດພັນພືດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີຈຸດປະສົງ ໂຄສະນາ ກ່ຽວກັບ ແນວພັນພືດ ແລະ ເມັດພັນພືດ ຕ້ອງຂໍອະນຸຍາດຈາກ ຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 36 ການນຳເຂົ້າເມັດພັນພືດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ນຳເຂົ້າເມັດພັນພືດ ຕ້ອງຂໍອະນຸຍາດຈາກກະຊວງກະສິກຳ ແລະ ປ່າໄມ້. ການນຳເຂົ້າເມັດພັນພືດ ແຕ່ລະຄັ້ງຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເປັນແນວພັນທີ່ໄດ້ຮັບການຂຶ້ນທະບຽນ ຢູ່ ສປປ ລາວ ແລະ ບໍ່ນອນໃນບັນຊີເຊື້ອພັນພືດຕ້ອງຫ້າມ ຂອງປະເທດຕົ້ນທາງ;
2. ໃບຢັ້ງຢືນສຸຂານາໄມພືດ ຈາກປະເທດຕົ້ນທາງ;
3. ໃບຢັ້ງຢືນຄຸນນະພາບເມັດພັນພືດ ຈາກປະເທດຕົ້ນທາງ.

ສຳລັບຂັ້ນຕອນການອະນຸຍາດນຳເຂົ້າ ເມັດພັນພືດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 37 ການສົ່ງອອກ ແລະ ການສົ່ງອອກຕໍ່ ເມັດພັນພືດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ສົ່ງອອກ ແລະ ສົ່ງອອກຕໍ່ ເມັດພັນພືດ ຕ້ອງຂໍອະນຸຍາດຈາກກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ. ການສົ່ງອອກ ແລະ ສົ່ງອອກ ຕໍ່ເມັດພັນພືດແຕ່ລະຄັ້ງ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ເປັນແນວພັນພືດທີ່ໄດ້ຮັບການຂຶ້ນທະບຽນ, ບໍ່ນອນໃນບັນຊີເຊື້ອພັນພືດຕ້ອງຫ້າມ ຂອງ ສປປ ລາວ;
2. ໃບຢັ້ງຢືນສຸຂານາໄມພືດ;
3. ເງື່ອນໄຂອື່ນ ທີ່ປະເທດປາຍທາງກຳນົດ.

ສຳລັບຂັ້ນຕອນໃນການອະນຸຍາດສົ່ງອອກ ແລະ ສົ່ງອອກຕໍ່ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 38 ການສົ່ງຜ່ານເມັດພັນພືດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ສົ່ງຜ່ານເມັດພັນພືດ ຕ້ອງຂໍອະນຸຍາດຈາກກະຊວງກະສິກຳ ແລະ ປ່າໄມ້. ການສົ່ງຜ່ານເມັດພັນພືດ ແຕ່ລະຄັ້ງຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເປັນແນວພັນທີ່ບໍ່ນອນໃນບັນຊີແຫຼ່ງເຊື້ອພັນພືດຕ້ອງຫ້າມ ຂອງປະເທດຕົ້ນທາງ;
2. ໃບຢັ້ງຢືນສຸຂານາໄມພືດ ຈາກປະເທດຕົ້ນທາງ;
3. ໃບຢັ້ງຢືນຄຸນນະພາບເມັດພັນພືດ ຈາກປະເທດຕົ້ນທາງ.

ສຳລັບຂັ້ນຕອນການອະນຸຍາດສົ່ງຜ່ານ ເມັດພັນພືດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 39 ການຈຳໜ່າຍ**

ການຈຳໜ່າຍເມັດພັນພືດ ຕ້ອງປະຕິບັດ ດັ່ງນີ້:

1. ຕ້ອງຂໍອະນຸຍາດຈຳໜ່າຍເມັດພັນພືດ ຕາມທີ່ກຳນົດໄວ້ໃນ ດຳລັດສະບັບນີ້;
2. ຮັບປະກັນ ການບັນຈຸ, ຫຸ້ມຫໍ່, ຕິດສະຫຼາກເມັດພັນພືດຢ່າງປອດໄພ;
3. ມີການເກັບຮັກສາ ແລະ ຂົນສົ່ງເມັດພັນພືດ ຢ່າງຖືກຕ້ອງຕາມເຕັກນິກ;
4. ຈຳໜ່າຍເມັດພັນພືດຕາມທີ່ໄດ້ຂຶ້ນທະບຽນໄວ້;
5. ໃຫ້ຄວາມຮ່ວມມື ກັບເຈົ້າໜ້າທີ່ກວດກາແນວພັນພືດ ໃນການກວດກາຄຸນນະພາບເມັດພັນພືດ.

## ໝວດທີ 7
## ການດຳເນີນທຸລະກິດເມັດພັນພືດ

**ມາດຕາ 40 ການດຳເນີນທຸລະກິດເມັດພັນພືດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງມີຈຸດປະສົງດຳເນີນທຸລະກິດເມັດພັນພືດ ຕ້ອງຍື່ນຄຳຮ້ອງ ພ້ອມເອກະສານຄົບຖ້ວນ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ພາຍຫຼັງທີ່ໄດ້ຂຶ້ນທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບ ເມັດພັນພືດ ນຳຂະແໜງກະສິກຳ ແລະ ປ່າໄມ້.

ປະເພດທຸລະກິດເມັດພັນພືດ ມີ ດັ່ງນີ້:

1. ການຜະລິດເມັດພັນພືດ;
2. ການນຳເຂົ້າ, ສົ່ງອອກ, ສົ່ງອອກຕໍ່ ແລະ ສົ່ງຜ່ານ ເມັດພັນພືດ;
3. ການຈຳໜ່າຍ ເມັດພັນພືດ;
4. ທຸລະກິດອື່ນທີ່ກ່ຽວກັບເມັດພັນພືດ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

### ມາດຕາ 41 ເງື່ອນໄຂການດຳເນີນທຸລະກິດເມັດພັນພືດ

ຜູ້ທີ່ຈະດຳເນີນທຸລະກິດເມັດພັນພືດ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີເນື້ອທີ່, ທຶນ, ສຳນັກງານ, ໂຮງງານປຸງແຕ່ງເມັດພັນພືດ, ສາງເກັບຮັກສາ, ຫ້ອງວິໄຈ, ເຄື່ອງມື, ອຸປະກອນ ແລະ ພາຫະນະຮັບໃຊ້ ທີ່ເໝາະສົມ;
2. ມີລະບົບການບໍລິຫານ, ມີບຸກຄະລາກອນທີ່ມີຄວາມຮູ້ດ້ານ ແນວພັນພືດ, ປ້ອງກັນພືດ, ທຸລະກິດເມັດພັນພືດ;
3. ເງື່ອນໄຂອື່ນ ທີ່ອົງການຄຸ້ມຄອງວຽກງານແນວພັນພືດເຫັນວ່າຈຳເປັນ.

### ມາດຕາ 42 ເອກະສານປະກອບການຂໍອະນຸຍາດ

ເອກະສານ ປະກອບການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບເມັດພັນພືດ ມີ ດັ່ງນີ້:

1. ໃບຄຳຮ້ອງຂໍໃບອະນຸຍາດ ຕາມແບບພິມທີ່ກົມປູກຝັງກຳນົດ;
2. ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ, ໃບມອບສິດ ຂອງຜູ້ຕາງໜ້າ ໃນກໍລະນີທີ່ໃຫ້ຜູ້ອື່ນມາແລ່ນເອກະສານແທນ;
3. ສຳເນົາໃບທະບຽນວິສາຫະກິດ ຫຼື ສຳເນົາໃບອະນຸຍາດລົງທຶນ;
4. ບົດວິພາກເສດຖະກິດ-ເຕັກນິກ ຫຼື ບົດສະເໜີແຜນການ ຫຼື ໂຄງການ;
5. ເອກະສານອື່ນທີ່ຈຳເປັນຕາມການຮຽກຮ້ອງຂອງຂະແໜງການກະສິກຳ ແລະ ປ່າໄມ້.

### ມາດຕາ 43 ການພິຈາລະນາກ່ຽວກັບການດຳເນີນທຸລະກິດເມັດພັນພືດ

ພາຍຫຼັງຂະແໜງການກະສິກຳ ແລະ ປ່າໄມ້ ໄດ້ຮັບສຳນວນເອກະສານຢ່າງຖືກຕ້ອງ, ຄົບຖ້ວນ ແລະ ຜ່ານການກວດກາສະຖານທີ່ແລ້ວ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບເມັດພັນພືດ ພາຍໃນກຳນົດເວລາ ສິບຫ້າ ວັນ.

ກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບເມັດພັນພືດໄດ້ ຕາມກຳນົດເວລາດັ່ງກ່າວຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຂໍອະນຸຍາດຊາບ.

### ມາດຕາ 44 ອາຍຸການນຳໃຊ້ໃບອະນຸຍາດດຳເນີນທຸລະກິດກ່ຽວກັບເມັດພັນພືດ

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບເມັດພັນພືດ ມີ ອາຍຸການນຳໃຊ້ ສອງ ປີ ແລະ ສາມາດຕໍ່ໄດ້.

ກ່ອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບເມັດພັນພືດຈະໝົດອາຍຸການນຳໃຊ້ ສາມສິບ ວັນ ຜູ້ດຳເນີນທຸລະກິດ ຕ້ອງຍື່ນຄຳຮ້ອງຂໍຕໍ່ອາຍຸການນຳໃຊ້ ນຳຂະແໜງກະສິກຳ ແລະ ປ່າໄມ້. ຂະແໜງກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາການ ຕໍ່ ຫຼື ບໍ່ຕໍ່ໃບອະນຸຍາດດຳເນີນທຸລະກິດ ພາຍໃນກຳນົດເວລາ ສິບຫ້າ ວັນ ນັບແຕ່ວັນທີ່ໄດ້ຮັບໃບຄຳຮ້ອງເປັນຕົ້ນໄປ.

ໃນກໍລະນີທີ່ໃບອະນຸຍາດດຳເນີນທຸລະກິດ ເສຍຫາຍ ຫຼື ຖືກທຳລາຍ ຜູ້ໄດ້ຮັບໃບອະນຸຍາດ ຕ້ອງແຈ້ງຕໍ່ຂະແໜງກະສິກຳ ແລະ ປ່າໄມ້ ໂດຍໃຫ້ປະກອບເອກະສານຂໍຮັບໃບອະນຸຍາດຄືນໃໝ່ ພາຍໃນກຳນົດເວລາ ສິບຫ້າ ວັນ ນັບແຕ່ວັນທີ່ ໃບອະນຸຍາດ ເສຍຫາຍ ຫຼື ຖືກທຳລາຍ ເປັນຕົ້ນໄປ. ຖ້າເກີນກຳນົດເວລາດັ່ງກ່າວ ຖືວ່າເປັນການສະລະສິດ.

### ມາດຕາ 45 ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດເມັດພັນພືດ

ຜູ້ດຳເນີນທຸລະກິດເມັດພັນພືດ ມີສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມການອະນຸຍາດ, ຕາມມາດຕະຖານເຕັກນິກ, ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;

2. ຮັບຂໍ້ມູນ ຂ່າວສານ ກ່ຽວກັບ ວຽກງານແນວພັນພືດ;
3. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການຂອງເຈົ້າໜ້າທີ່ກວດກາແນວພັນພືດ;
4. ປະກອບສ່ວນ ທາງດ້ານທຶນຮອນ ຫຼື ແຮງງານ ເຂົ້າໃນການພັດທະນາ ວຽກງານແນວພັນພືດ;
5. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ກວດກາແນວພັນພືດ.
6. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 46 ການໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ**

ການດຳເນີນທຸລະກິດເມັດພັນພືດ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ ໃນກໍລະນີ ທີ່ປະສົບບັນຫາດ້ານທຸລະກິດ;
2. ຜູ້ປະກອບການ ດຳເນີນທຸລະກິດບໍ່ຖືກຕ້ອງຕາມການອະນຸຍາດ;
3. ຜູ້ປະກອບການ ບໍ່ປະຕິບັດຕາມການກ່າວເຕືອນ ຂອງອົງການຄຸ້ມຄອງວຽກງານແນວພັນພືດ ກ່ຽວກັບການລະເມີດກົດໝາຍ, ລະບຽບການ ຫຼື ພຶດຕິກຳອື່ນ ທີ່ສ້າງຄວາມເສຍຫາຍ ຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

ການໂຈະການດຳເນີນທຸລະກິດເມັດພັນພືດ ແມ່ນເພື່ອໃຫ້ຫົວໜ່ວຍທຸລະກິດ ປັບປຸງ, ແກ້ໄຂບັນຫາໃດໜຶ່ງໃນເວລາອັນແນ່ນອນ ໂດຍການແຈ້ງເປັນລາຍລັກອັກສອນ ໃຫ້ແກ່ຜູ້ປະກອບການຮັບຊາບ.

ໃນກໍລະນີຜູ້ປະກອບການບໍ່ປັບປຸງ, ແກ້ໄຂ ຕາມເງື່ອນໄຂ ແລະ ກຳນົດເວລາ ໃນແຈ້ງການໂຈະນັ້ນ ອົງການຄຸ້ມຄອງວຽກງານແນວພັນພືດ ມີສິດສະເໜີຖອນໃບອະນຸຍາດດຳເນີນທຸລະກິດເມັດພັນພືດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

## ໝວດທີ 8
## ຂໍ້ຫ້າມ

**ມາດຕາ 47 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ຂຸດຄົ້ນ, ນຳໃຊ້ ແລະ ແລກປ່ຽນ ເຊື້ອພັນພືດ ເຂົ້າໃນການເຄື່ອນໄຫວ ວຽກງານແນວພັນພືດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຂຸດຄົ້ນ, ນຳໃຊ້, ແລກປ່ຽນ ແລະ ສົ່ງອອກ ເຊື້ອພັນພືດ ທີ່ນອນໃນບັນຊີເຊື້ອພັນພືດຕ້ອງຫ້າມ;
3. ຈຳໜ່າຍ ເມັດພັນພືດ ທີ່ບໍ່ໄດ້ຂຶ້ນທະບຽນ ແນວພັນພືດ ຫຼື ເມັດພັນພືດຂອງຜູ້ອື່ນ ທີ່ບໍ່ໄດ້ຮັບອະນຸຍາດເປັນລາຍລັກອັກສອນ ຈາກເຈົ້າຂອງໃບທະບຽນແນວພັນພືດ;
4. ຜະລິດ, ນຳເຂົ້າ ຫຼື ແຈກຢາຍເມັດພັນພືດ ທີ່ບໍ່ໄດ້ຂຶ້ນທະບຽນ ແນວພັນພືດ, ເມັດພັນພືດ ທີ່ບໍ່ໄດ້ຮັບການຢັ້ງຢືນຄຸນນະພາບ ຫຼື ເມັດພັນພືດປອມ;
5. ດຳເນີນທຸລະກິດເມັດພັນພືດທີ່ບໍ່ຮັບການຂຶ້ນທະບຽນ ແນວພັນພືດ;
6. ນຳເຂົ້າ, ຜະລິດ ແລະ ດຳເນີນທຸລະກິດເມັດພັນພືດ ຕັດແຕ່ງພັນທຸກຳ;
7. ໂຄສະນາຄຸນນະພາບຂອງເມັດພັນພືດທີ່ບໍ່ມີຄວາມຈິງ ຫຼື ເກີນຄວາມເປັນຈິງ ຊຶ່ງເຮັດໃຫ້ຜູ້ອື່ນຫຼົງເຊື່ອໃນຄຸນນະພາບຂອງເມັດພັນພືດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 48 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ນອກຈາກຂໍ້ຫ້າມທົ່ວໄປ ທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງດຳລັດສະບັບນີ້, ຫ້າມຜູ້ດຳເນີນທຸລະກິດ ເມັດພັນພືດ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ດຳເນີນທຸລະກິດເມັດພັນພືດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ໂຄສະນາ ຫຼື ໃຊ້ຮ້າຍປ້າຍສີ ຜູ້ດຳເນີນທຸລະກິດອື່ນ;
3. ຜະລິດ ແລະ ຈຳໜ່າຍ ເຊື້ອພັນພືດ ໂດຍບໍ່ໄດ້ຮັບອະນຸຍາດ;
4. ຈຳໜ່າຍ ເມັດພັນພືດ ທີ່ບໍ່ທັນໄດ້ຂຶ້ນທະບຽນ, ບໍ່ໄດ້ຮັບການຢັ້ງຢືນດ້ານຄຸນນະພາບ ຫຼື ເມັດພັນປອມ;
5. ໂອນ ໃບອະນຸຍາດດຳເນີນທຸລະກິດເມັດພັນພືດ, ໃບທະບຽນແນວພັນພືດ ຫຼື ໃບຢັ້ງຢືນຄຸນນະພາບເມັດພັນພືດ ໃຫ້ຜູ້ອື່ນນຳໃຊ້;
6. ໃຫ້ສິນບົນແກ່ພະນັກງານ, ປອມແປງເອກະສານ ກ່ຽວກັບ ວຽກງານແນວພັນພືດ;
7. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ.

**ມາດຕາ 49 ຂໍ້ຫ້າມສຳລັບເຈົ້າໜ້າທີ່ກວດກາແນວພັນພືດ**

ນອກຈາກຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງດຳລັດສະບັບນີ້, ຫ້າມເຈົ້າໜ້າທີ່ກວດກາແນວພັນ ພືດ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ສິດ ແລະ ໜ້າທີ່ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ກົດໜ່ວງທ່ວງດຶງ, ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ;
2. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ປອມແປງເອກະສານ, ຂາດຄວາມຮັບຜິດຊອບ ຕໍ່ວຽກງານຄຸ້ມຄອງແນວພັນພືດ;
3. ເມີນເສີຍຕໍ່ລະບຽບຫຼັກການໃນການຄຸ້ມຄອງແນວພັນພືດ ແລະ ແກ້ໄຂວຽກງານໂດຍບໍ່ຖືກຕ້ອງ ຕາມລະບຽບຫຼັກການ;
4. ເພີ່ມ ຫຼື ຫຼຸດ ຄ່າທຳນຽມ, ຄ່າບໍລິການ ແລະ ການນຳໃຊ້ລາຍຮັບຈາກການຄຸ້ມຄອງແນວພັນພືດຕາມລຳພັງ;
5. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ.

## ໝວດທີ 9
## ການຄຸ້ມຄອງ ແລະ ກວດກາ ວຽກງານແນວພັນພືດ

**ມາດຕາ 50 ອົງການຄຸ້ມຄອງ ແລະ ກວດກາ ວຽກງານແນວພັນພືດ**

ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການໃນການຄຸ້ມຄອງ ແລະ ກວດກາ ວຽກງານແນວພັນພືດ ໂດຍປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານແນວພັນພືດ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;
4. ຈຸງານກະສິກຳ ແລະ ປ່າໄມ້ບ້ານ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ.

**ມາດຕາ 51 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານແນວພັນພືດ ເພື່ອສະເໜີລັດຖະບານ ພິຈາລະນາ ພ້ອມທັງຜັນຂະຫຍາຍມາເປັນ ແຜນການ, ແຜນງານ, ໂຄງການ ລະອຽດ ເພື່ອຈັດຕັ້ງປະຕິບັດ;
2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບ ວຽກງານແນວພັນພືດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ວຽກງານແນວພັນພືດ;
4. ຄຸ້ມຄອງ, ອອກ, ໂຈະ ແລະ ຖອນ ໃບທະບຽນແນວພັນພືດສົ່ງເສີມ, ໃບອະນຸຍາດດຳເນີນທຸລະກິດເມັດພັນພືດ ແລະ ໃບຢັ້ງຢືນຄຸນນະພາບເມັດພັນພືດ;
5. ພິຈາລະນາອະນຸຍາດການສົ່ງອອກ ແລະ ການນຳເຂົ້າເມັດພັນພືດ ເພື່ອຄົ້ນຄວ້າ, ທົດລອງ, ວາງສະແດງ, ການຊ່ວຍເຫຼືອ ຫຼື ນຳເຂົ້າໃນກໍລະນີສຸກເສີນ ເພື່ອຮັບໃຊ້ໂຄງການໃດໜຶ່ງຂອງລັດຖະບານ ລວມທັງການນຳເຂົ້າ ເມັດພັນພືດ ເພື່ອເປົ້າໝາຍການຄ້າ ທີ່ກວມເອົາພື້ນທີ່ ແຕ່ສອງແຂວງຂຶ້ນໄປ;
6. ສ້າງ ແລະ ປັບປຸງ ບັນຊີ ເຊື້ອພັນພືດຕ້ອງຫ້າມ, ແນວພັນພືດສົ່ງເສີມ ແລະ ເມັດພັນພືດຄວບຄຸມ;
7. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ໂຄງລ່າງພື້ນຖານ, ໂຮງງານປຸງແຕ່ງເມັດພັນພືດ, ພ້ອມທັງສ້າງ ແລະ ພັດທະນາມາດຕະຖານ ຫ້ອງວິໄຈເມັດພັນພືດ ແລະ ຄຸນນະພາບເມັດພັນພືດ;
8. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບ ວຽກງານແນວພັນພືດ;
9. ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານແນວພັນພືດ ໃນຂອບເຂດທົ່ວປະເທດ;
10. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີ ກ່ຽວກັບ ວຽກງານ ແນວພັນພືດ;
11. ພົວພັນຮ່ວມມື ປະສານສົມທົບກັບ ກະຊວງ, ອົງການ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບ ວຽກງານ ແນວພັນພືດ;
12. ສະຫຼຸບ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ວຽກງານແນວພັນ ໃນຂອບເຂດທົ່ວປະເທດ ໃຫ້ຂັ້ນເທິງຊາບ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 52 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ**

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານແນວພັນພືດ;
2. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ, ຂໍ້ມູນຂ່າວສານ ກ່ຽວກັບ ແນວພັນພືດ ໃຫ້ປະຊາຊົນ ແລະ ທຸກພາກສ່ວນ ເຂົ້າໃຈ ແລະ ເຂົ້າຮ່ວມ ໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
3. ຄົ້ນຄວ້າ ແລະ ນຳສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບ ວຽກງານແນວພັນພືດ;
4. ຄົ້ນຄວ້າ ແລະ ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດເມັດພັນພືດ, ໃບຢັ້ງຢືນຄຸນນະພາບເມັດພັນພືດ ແລະ ໃບອະນຸຍາດອື່ນ ກ່ຽວກັບ ການຜະລິດ, ການນຳເຂົ້າ, ການຈຳໜ່າຍເມັດພັນພືດ ຕາມການມອບໝາຍຂອງກະຊວງກະສິກຳ ແລະ ປ່າໄມ້;
5. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບ ວຽກງານແນວພັນພືດ;
6. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີ ກ່ຽວກັບ ວຽກງານແນວພັນພືດ;

7. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານແນວພັນພືດ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;
8. ປະສານສົມທົບກັບ ພະແນກການ, ຫ້ອງການ ຂັ້ນແຂວງ, ຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານແນວພັນພືດ;
9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານແນວພັນພືດ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງ ຂັ້ນແຂວງ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 53 ສິດ ແລະ ໜ້າທີ່ຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານແນວພັນພືດ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ແລະ ຂໍ້ມູນ ຂ່າວສານ ກ່ຽວກັບ ແນວພັນພືດ ໃຫ້ປະຊາຊົນ ແລະ ທຸກພາກສ່ວນເຂົ້າໃຈ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;
3. ຄົ້ນຄວ້າ ແລະ ນຳສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ ອອກຂໍ້ຕົກລົງ, ຄຳສັ່ງ , ຄຳແນະນຳ ແລະ ແຈ້ງການ ກ່ຽວກັບ ວຽກງານແນວພັນພືດ;
4. ຝຶກອົບຮົມ ກ່ຽວກັບ ການອະນຸລັກເຊື້ອພັນພືດ, ການຜະລິດ, ກວດກາ, ເກັບຮັກສາ ແລະ ນຳໃຊ້ແນວພັນພືດ ແລະ ເມັດພັນພືດ ໃຫ້ແກ່ ວິຊາການ, ຜູ້ດຳເນີນທຸລະກິດ ແລະ ຊາວກະສິກອນ;
5. ຄົ້ນຄວ້າ ແລະ ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບທະບຽນຜູ້ຜະລິດເມັດພັນພືດ ແລະ ໃບອະນຸຍາດຈຳໜ່າຍເມັດພັນພືດ;
6. ຮັບ ແລະ ພິຈາລະນາ ແກ້ໄຂ ຄຳສະເໜີ ກ່ຽວກັບ ວຽກງານແນວພັນພືດ;
7. ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານແນວພັນພືດ;
8. ສະຫຼຸບ ແລະ ລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດ ວຽກງານແນວພັນພືດ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ອົງການປົກຄອງ ຂັ້ນເມືອງ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ ຂໍ້ມູນຂ່າວສານ ແລະ ເຕັກນິກການນຳໃຊ້ ແນວພັນພືດສິ່ງເສີມ ໃຫ້ປະຊາຊົນ ເຂົ້າໃຈ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;
2. ຕ້ານ ແລະ ສະກັດກັ້ນ ການລັກລອບນຳເຂົ້າ, ການຈຳໜ່າຍ, ການນຳໃຊ້ ແນວພັນພືດ ແລະ ເມັດພັນພືດທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
3. ເປັນເຈົ້າການ ຕິດຕາມ, ກວດກາ ການຜະລິດ, ເກັບຮັກສາ, ການຈຳໜ່າຍ ແລະ ການນຳໃຊ້ ແນວພັນພືດ ແລະ ເມັດພັນພືດ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
4. ເຂົ້າຮ່ວມກອງປະຊຸມ ສຳມະນາ, ຝຶກອົບຮົມ ເພື່ອຍົກລະດັບຄວາມຮູ້ ກ່ຽວກັບ ວຽກງານແນວພັນພືດ ເປັນແຕ່ລະໄລຍະ;
5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ກ່ຽວກັບ ວຽກງານແນວພັນພືດ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ອົງການປົກຄອງບ້ານ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ**

ໃນການຄຸ້ມຄອງ ວຽກງານແນວພັນພືດ ຂະແໜງການອື່ນ ເປັນຕົ້ນ ຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ, ຂະແໜງການສາທາລະນະສຸກ, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ຄຸ້ມຄອງ, ຕິດຕາມກວດກາວຽກງານແນວພັນພືດ ແລະ ຮ່ວມມືກັບອົງການຄຸ້ມຄອງ ວຽກງານແນວພັນພືດ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 56 ເຈົ້າໜ້າທີ່ກວດກາແນວພັນພືດ**

ເຈົ້າໜ້າທີ່ກວດກາແນວພັນພືດ ແມ່ນ ພະນັກງານວິຊາການປູກຝັງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຈາກກະຊວງກະສິກຳ ແລະ ປ່າໄມ້ ຫຼື ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ໃຫ້ປະຕິບັດ ວຽກງານກວດກາແນວພັນພືດ.

ສຳລັບມາດຕະຖານ ແລະ ເງື່ອນໄຂ ຂອງເຈົ້າໜ້າທີ່ກວດກາແນວພັນພືດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 57 ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ກວດກາແນວພັນພືດ**

ເຈົ້າໜ້າທີ່ກວດກາແນວພັນພືດມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ແນະນຳກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານແນວພັນພືດ ໂດຍສະເພາະບັນຊີແນວພັນພືດສົ່ງເສີມ ຕາມທີ່ກຳນົດໄວ້ໃນມາດຕາ 11 ຂອງດຳລັດສະບັບນີ້;
2. ລົງກວດກາສະຖານທີ່ຜະລິດ, ຮ້ານຈຳໜ່າຍ, ສາງເກັບຮັກສາ, ການໂຄສະນາ, ການນຳເຂົ້າ, ການຂົນສົ່ງ, ການສົ່ງອອກ ແລະ ສະຖານທີ່ ນຳໃຊ້ ແນວພັນພືດ ແລະ ເມັດພັນພືດ;
3. ເກັບຕົວຢ່າງ ແນວພັນພືດ ແລະ ເມັດພັນພືດ ເພື່ອນຳໄປວິໄຈຄຸນນະພາບ ຫຼື ນຳໃຊ້ເປັນຫຼັກຖານ;
4. ຍຶດເມັດພັນພືດທີ່ບໍ່ໄດ້ຄຸນນະພາບ, ເມັດພັນປອມ ແລະ ເອກະສານທີ່ກ່ຽວຂ້ອງ ກັບການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານແນວພັນພືດ ພ້ອມທັງລາຍງານໃຫ້ອົງການຄຸ້ມຄອງ ວຽກງານແນວພັນພືດ ເພື່ອນຳໃຊ້ມາດຕະການ ຕາມແຕ່ລະກໍລະນີ;
5. ປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອນຳໃຊ້ມາດຕະການຕ່າງໆທີ່ຈຳເປັນ ເປັນຕົ້ນ ສັ່ງໃຫ້ຢຸດລົດ ເພື່ອກວດຄົ້ນ, ເຂົ້າໄປໃນສະຖານທີ່ ຫຼື ເປົ້າໝາຍໃດໜຶ່ງ ທີ່ສົງໄສ ວ່າມີການລະເມີດດຳລັດ ແລະ ລະບຽບການ ກ່ຽວກັບ ແນວພັນພືດ;
6. ຮັບ, ບັນທຶກ ການແຈ້ງຄວາມ, ເອົາຄຳໃຫ້ການເບື້ອງຕົ້ນ ພ້ອມທັງກວດກາເອກະສານ ແລະ ທວງເອົາເອກະສານ ທີ່ກ່ຽວຂ້ອງກັບການລະເມີດດຳລັດ ແລະ ລະບຽບການ ກ່ຽວກັບ ວຽກງານແນວພັນພືດ;
7. ສຶກສາອົບຮົມ ແລະ ປັບໃໝ ຜູ້ລະເມີດ ດຳລັດ ແລະ ລະບຽບການ ກ່ຽວກັບ ວຽກງານແນວພັນພືດ;
8. ສະຫຼຸບ ແລະ ລາຍງານ ຜົນການກວດກາ ແລະ ປະກອບເອກະສານ ໃຫ້ອົງການຄຸ້ມຄອງ ວຽກງານແນວພັນພືດ ຂັ້ນຕົ້ນ ຫຼື ເຈົ້າໜ້າທີ່ສືບສວນ-ສອບສວນ ເພື່ອແກ້ໄຂ ຫຼື ດຳເນີນຄະດີ ຕາມກົດໝາຍ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການມອບໝາຍ.

**ມາດຕາ 58 ເນື້ອໃນການກວດກາ**

ການກວດກາວຽກງານແນວພັນພືດ ປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານແນວພັນພືດ;
2. ການປະຕິບັດໜ້າທີ່ຂອງ ພະນັກງານ ແລະ ເຈົ້າໜ້າທີ່ກວດກາແນວພັນພືດ;
3. ການດຳເນີນທຸລະກິດເມັດພັນພືດ ເປັນຕົ້ນ ການຜະລິດ, ການຈຳໜ່າຍ, ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ, ສົ່ງຜ່ານເມັດ ພັນພືດ;
4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບ ວຽກງານແນວພັນພືດ.

**ມາດຕາ 59 ຮູບການການກວດກາ**

ການກວດກາ ວຽກງານແນວພັນພືດ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;
3. ການກວດກາແບບສຸກເສີນ ຊຶ່ງແມ່ນການກວດກາຢ່າງຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 60 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 61 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ຮັບຜິດຊອບທາງແພ່ງ ຫຼື ລົງໂທດ ທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

**ມາດຕາ 62 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 63 ມາດຕະການທາງວິໄນ**

ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ກໍ່ຄວາມເສຍຫາຍ ແຕ່ບໍ່ຈິງໃຈລາຍງານ ຈະຖືກລົງວິໄນ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 64 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ແລະ ກໍຄວາມເສຍຫາຍ ຈະຖືກຢຶດ ແລະ ປັບໃໝ ໜຶ່ງເທົ່າຂອງມູນຄ່າ ແນວພັນພືດ ແລະ ເມັດພັນພືດ.

ໃນກໍລະນີມີການລະເມີດເປັນຄັ້ງທີສອງ ຫຼື ເປັນອາຈິນ ກໍຈະຖືກຍຶດ ແລະ ປັບໃໝສາມເທົ່າຂອງມູນຄ່າ ທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້.

**ມາດຕາ 65 ມາດຕະການທາງອາຍາ**

ບຸກຄົນໃດທີ່ໄດ້ລະເມີດດຳລັດສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນ ຕາມກໍລະນີ ເບົາ ຫຼື ໜັກ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 66 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 67 ຜົນສັກສິດ**

ດຳລັດ ສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ຕາງໜ້າ ລັດຖະບານແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ